# ພິທີເຊັນສັນຍາ

## ວ່າດ້ວຍການໃຫ້ບໍລິການທີ່ປຶກສາດ້ານການເງິນ ໃນການອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມວນຊົນທົ່ວໄປ (RO&PO)

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company




### ໃນຕອນເຊົ້າ ວັນພະຫັດ ວັນທີ 03 ກໍລະກົດ 2025

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ມີພິທີລົງນາມ ໃນສັນຍາວ່າດ້ວຍ ການບໍລິການທີ່ປຶກສາດ້ານການເງິນ ໃນການອອກຈຳໜ່າຍຮຸ້ນເພີ່ມທຶນ ໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມວນຊົນທົ່ວໄປ (RO/PO) ລະຫວ່າງ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດຫຼັບຊັບ ລາວ-ຈີນ ມະຫາຊົນ (ບລຈ) ຢ່າງເປັນທາງການ

---




ໃຫ້ກຽດເຂົ້າຮ່ວມໃນພິທີດັ່ງກ່າວ ມີ ທ່ານ ນາງ ແພງສີ ແພງເມືອງ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ), ທ່ານ ສຽວສະຫວາດ ທິລະກຸນ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ, ທ່ານ ປະສົມເພັດ ຄຳຕັນ ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດ ລົງທຶນ ແລະ ການປະກັນໄພ, ກະຊວງການເງິນ, ພ້ອມດ້ວຍແຂກທີ່ຖືກເຊີນຈາກ ກົມຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ, ຄະນະອຳນວຍການບໍລິສັດ ຫຼັກຊັບ BCEL-KT ຈຳກັດ, ບໍລິສັດຫຼັກຊັບ LDB ຈຳກັດຜູ້ດຽວ ພ້ອມດ້ວຍພະນັກງານພາຍໃນ ທຄຕລ ແລະ ສື່ມວນຊົນເຂົ້າຮ່ວມ.

ໃນພິທີດັ່ງກ່າວ ໃຫ້ກຽດລົງນາມໃນສັນຍາໂດຍ ທ່ານ ນາງ ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທ່ານ ລິນ ລີ ຜູ້ອຳນວຍການ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ໂດຍມີແຂກຖືກເຊີນ ແລະ ພະນັກງານຂອງທັງສອງຝ່າຍ ເຂົ້າຮ່ວມເປັນສັກຂີພະຍານ ຢ່າງພ້ອມພຽງ.






**ທ່ານ ນາງ ສາຍສະໝອນ ຈັນທະຈັກ** ໄດ້ລາຍງານວ່າ ອີງຕາມຕົວເລກໃນເດືອນ 12/2024, ອັດຕາສ່ວນຄວາມພຽງພໍຂອງທຶນ (CAR Ratio) ຂອງ ທຄຕລ ໄດ້ຫຼຸດມາດຕະຖານທີ່ທະນາຄານແຫ່ງ ສປປ ລາວ ວາງໄວ້ຄື 8%. ສະນັ້ນ ເພື່ອຍົກສູງຄວາມອາດສາມາດຂອງ ທຄຕລ ໃນການຂະຫຍາຍທຸລະກິດ ແລະ ຮັບປະກັນຄວາມໝັ້ນຄົງ ແລະ ຄວາມເຊື່ອໝັ້ນຕໍ່ ທຄຕລ, ສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນຂອງ ທຄຕລ ຈຶ່ງໄດ້ຕົກລົງເຫັນດີໃຫ້ເພີ່ມທຶນຈຳນວນ 833 ຕື້ກີບ ຊຶ່ງຄາດໝາຍໃຫ້ສຳເລັດພາຍໃນປີ 2025 ນີ້. ການເພີ່ມທຶນຄັ້ງນີ້ ເປັນການເພີ່ມທຶນເພື່ອໃຫ້ ທຄຕລ ບັນລຸມາດຖານຄວາມພຽງພໍຂອງທຶນ ແລະ ຮັບປະກັນຄວາມໝັ້ນຄົງ.

ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ ແລະ ນິຕິກຳທີ່ກ່ຽວຂ້ອງໃນການເພີ່ມທຶນ, ທຄຕລ ຕ້ອງໄດ້ມີການວ່າຈ້າງບໍລິສັດທີ່ປຶກສາທາງການເງິນ ຫຼື FA ເພື່ອດຳເນີນຂະບວນການເພີ່ມທຶນຈົນສຳເລັດ. ຜ່ານການພິຈາລະນາເຫັນວ່າ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ໄດ້ຮັບການຄັດເລືອກເປັນທີ່ປຶກສາດ້ານການເງິນ ແລະ ເປັນຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນເພີ່ມທຶນ RO/PO ໃນຄັ້ງນີ້.

**ທ່ານ ລິນ ລີ ຜູ້ອຳນວຍການ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ** ໄດ້ກ່າວວ່າ ແຜນການອອກຈຳ ໜ່າຍຮຸ້ນເພີ່ມທຶນຂອງ ທຄຕລ ບໍ່ພຽງແຕ່ຈະສ້າງຄວາມໝັ້ນຄົງເທົ່ານັ້ນ, ແຕ່ຍັງຈະເປັນການປະກອບສ່ວນທີ່ສຳຄັນເຂົ້າໃນການພັດທະນາຕະຫຼາດທຶນ ແລະ ເສດຖະກິດຂອງ ສປປ ລາວ, ເປັນການຍົກລະດັບຄວາມເຊື່ອໝັ້ນຂອງຜູ້ລົງທຶນຕໍ່ລະບົບການເງິນຂອງ ສປປ ລາວ ແລະ ສົ່ງເສີມການລົງທຶນຈາກຕ່າງ ປະເທດ. ບລຈ ໃນຖານະເປັນທີ່ປຶກສາດ້ານການເງິນ ແລະ ເປັນຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນເພີ່ມທຶນ RO/PO ໃນຄັ້ງນີ້ ມີຄວາມເຊື່ອໝັ້ນວ່າ ການຈັດຈຳໜ່າຍຮຸ້ນເພີ່ມທຶນໃນຄັ້ງນີ້ ຈະປະສົບຜົນສຳເລັດຕາມແຜນການທີ່ວາງໄວ້.

